ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

Lao Securities Commission

ເລກທີ 001 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 14 FEB 2014

# ແຈ້ງການ

ເຖິງ: ບັນດາວິສາຫະກິດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ໃນ ສປປ ລາວ.

ເລື່ອງ: ການລະດົມທຶນ ໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນ ຢູ່ ຕ່າງປະເທດ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013.

ຄະນະກຳມະການຄຸ້ມຄອງຫຼັກຊັບ ໃນຖານະເປັນເສນາທິການໃຫ້ລັດຖະບານ ສປປ ລາວ ໃນການຄຸ້ມຄອງມະຫາພາກ ທາງດ້ານວຽກງານຫຼັກຊັບ ຢ່າງລວມສູນ ໃນຂອບເຂດທົ່ວ ແຈ້ງມາຍັງບັນດາວິສາຫະກິດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ໃນ ສປປ ລາວ ເພື່ອຊາບທົ່ວເຖິງກັນວ່າ: ກໍລະນີ ວິສາຫະກິດໃດໜຶ່ງ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ຕາມກົດໝາຍຂອງ ສປປ ລາວ ມີຈຸດປະສົງຕ້ອງການໄປລະດົມທຶນ ໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນ ຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງທີ່ໄດ້ກຳນົດໄວ້ໃນ ວັກທີ 2 ມາດຕາ 8 ຂອງກົດໝາຍວ່າດ້ວຍຫຼັກຊັບ.

ບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນ ຢູ່ຕ່າງປະເທດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຳນັກງານ ຄຄຊ).

ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ ມີດັ່ງນີ້:

1. ໃບຄຳຮ້ອງ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບທະບຽນສຳປະທານ (ກໍລະນີເປັນທຸລະກິດ ທີ່ໄດ້ຮັບສຳປະທານ);
4. ສຳເນົາໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ;
5. ສຳເນົາກົດລະບຽບຂອງບໍລິສັດ;
6. ສຳເນົາມະຕິກອງປະຊຸມຜູ້ຖືຮຸ້ນ ຫຼື ຜູ້ມີສິດອຳນາດ ທີ່ອະນຸມັດກ່ຽວກັບການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ;
7. ລາຍຊື່ ແລະ ຊີວະປະຫວັດຂອງ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ, ຄະນະກຳມະການອື່ນຂອງສະພາບໍລິຫານ (ຖ້າມີ) ແລະ ຄະນະອຳນວຍການ ຂອງບໍລິສັດ;
8. ໂຄງສ້າງການຖືຮຸ້ນ ແລະ ບັນຊີລາຍຊື່ ຜູ້ຖືຮຸ້ນ ແຕ່ໜຶ່ງສ່ວນຮ້ອຍຂຶ້ນໄປ;

9. ສຳເນົາເອກະສານລາຍງານການເງິນ 3 ປີຄືນຫຼັງຂອງບໍລິສັດ ຫຼື ນັບແຕ່ປີທີ່ໄດ້ຮັບການສ້າງຕັ້ງ ທີ່ຜ່ານການກວດສອບພາຍນອກ;
10. ບົດສະຫຼຸບຫຍໍ້ຂໍ້ມູນກ່ຽວກັບ ບໍລິສັດ ແລະ ຫຼັກຊັບທີ່ຈະອອກຈຳໜ່າຍ;
11. ແຜນການນຳໃຊ້ທຶນທີ່ຈະລະດົມ;
12. ບົດລາຍງານຄວາມຄືບໜ້າໃນການກະກຽມໄປອອກຈຳໜ່າຍຫຼັກຊັບ ຢູ່ຕ່າງປະເທດ;
13. ສະຫຼຸບຫຍໍ້ເງື່ອນໄຂໃນການໄປອອກຈຳໜ່າຍຫຼັກຊັບ ຢູ່ຕ່າງປະເທດ ຕາມລະບຽບການຂອງອົງການຄຸ້ມຄອງວຽກງານຫຼັກຊັບໃນປະເທດທີ່ຈະໄປອອກຈຳໜ່າຍຫຼັກຊັບ ແລະ ບັນດາພັນທະທີ່ບໍລິສັດ ຕ້ອງປະຕິບັດພາຍຫຼັງສຳເລັດການອອກຈຳໜ່າຍຫຼັກຊັບ;
14. ສຳເນົາຄຳຮ້ອງ ແລະ ເອກະສານປະກອບ ທີ່ສະເໜີຍື່ນຕໍ່ອົງການຄຸ້ມຄອງວຽກງານຫຼັກຊັບຢູ່ຕ່າງປະເທດ (ລວມທັງຮ່າງໜັງສືຊວນຊື້).

ພາຍຫຼັງ ໄດ້ຮັບອະນຸຍາດຈາກ ສຳນັກງານ ຄຄຊ ຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ພັນທະຕໍ່ສຳນັກງານ ຄຄຊ ດັ່ງນີ້:

1. ຕ້ອງລາຍງານກ່ຽວກັບຜົນການພິຈາລະນາຂອງ ອົງການຄຸ້ມຄອງວຽກງານຫຼັກຊັບຕ່າງປະເທດ ລວມທັງຜົນການລະດົມທຶນ ໃຫ້ສຳນັກງານ ຄຄຊ ຊາບພາຍໃນ 10 ວັນລັດຖະການ;
2. ກໍລະນີ ບໍລິສັດ ມີຈຸດປະສົງຂໍລະດົມທຶນເພີ່ມ ດ້ວຍການອອກຈຳໜ່າຍຫຼັກຊັບອີກຄັ້ງໃໝ່ ຕ້ອງລາຍງານເພື່ອຂໍອະນຸຍາດ ຈາກ ສຳນັກງານ ຄຄຊ ກ່ອນທີ່ຈະປະສານກັບເຈົ້າໜ້າທີ່ກ່ຽວຂ້ອງຂອງຕ່າງປະເທດທຸກຄັ້ງ;
3. ທຸກການປ່ຽນແປງທີ່ສຳຄັນກ່ຽວກັບບໍລິສັດ ຫຼື ການເຄື່ອນໄຫວທຸລະກິດ ລວມທັງການປ່ຽນແປງທະບຽນວິສາຫະກິດ, ການອະນຸຍາດລົງທຶນ, ການສຳປະທານ, ການຈັດຕັ້ງຂອງບໍລິສັດ ແລະ ການຖືກປະຕິບັດມາດຕະການຕ່າງໆ ຕ້ອງລາຍງານໃຫ້ ສຳນັກງານ ຄຄຊ ຊາບພາຍໃນ 5 ວັນ ລັດຖະການ;
4. ທຸກເອກະສານລາຍງານການເງິນ ແລະ ຂໍ້ມູນອື່ນໆ ທີ່ບໍລິສັດສະໜອງໃຫ້ແກ່ອົງການຄຸ້ມຄອງວຽກງານການອອກຈຳໜ່າຍຫຼັກຊັບ ຢູ່ຕ່າງປະເທດ ຕ້ອງສຳເນົາໃຫ້ແກ່ ສຳນັກງານ ຄຄຊ 1 ຊຸດ;
5. ໃຫ້ການຮ່ວມມືກັບ ສຳນັກງານ ຄຄຊ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ໃນການສະໜອງຂໍ້ມູນຮອບດ້ານກ່ຽວກັບບໍລິສັດ ແລະ ການເຄື່ອນໄຫວທຸລະກິດ ລວມທັງການອຳນວຍຄວາມສະດວກໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການປະສານກັບພາກສ່ວນກ່ຽວຂ້ອງ ເຊັ່ນ: ລູກຄ້າ, ຜູ້ສະໜອງ ຫຼື ເຈົ້າໜີ້, ຜູ້ກວດສອບບັນຊີ, ທີ່ປຶກສາກົດໝາຍ ເພື່ອເອົາຂໍ້ມູນຈຳເປັນ;
6. ປະຕິບັດລະບຽບການກ່ຽວຂ້ອງອື່ນທີ່ສຳນັກງານ ຄຄຊ ກຳນົດອອກໃນແຕ່ລະໄລຍະ.

ການອອກຈຳໜ່າຍຫຼັກຊັບ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 168 ຂອງກົດໝາຍວ່າດ້ວຍຫຼັກຊັບ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງບັນດາວິສາຫະກິດ ໃນ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ສົມສະຫວາດ ເລັ່ງສະຫວັດ